**ຖະແຫຼງການຄູ່ຮ່ວມພັດທະນາເອີຣົບ**
**ທີ່ກອງປະຊຸມການຈັດຕັ້ງປະຕິບັດກອບກອງປະຊຸມໂຕະມົນຂອງ ສປປລາວ ປະຈຳປີ2014**

***ການຈັດຕັ້ງປະຕິບັດແຜນພັດທະນາເສດຖະກິດສັງຄົມແຫ່ງຊາດຄັ້ງທີ7***

ຄູ່ຮ່ວມພັດທະນາເອີຣົບທີ່ມີການຮ່ວມມືດ້ານການພັດທະນາໃນສປປລາວ ເຊິ່ງປະກອບມີ ສະຫະພາບເອີຣົບ ແລະບັນດາປະເທດສະມາຊິກສະຫະພາບເອີຣົບແລະສະວິດເຊີແລນ ຂໍສະແດງຄວາມຊົມເຊີຍມາຍັງລັດຖະບານໃນການບັນລຸສະຖານະປະເທດທີ່ມີລາຍຮັບລະດັບກາງຂັ້ນຕ່ຳ ໃນໄລຍະການຈັດຕັ້ງປະຕິບັດແຜນພັດທະນາເສດຖະກິດສັງຄົມແຫ່ງຊາດຄັ້ງທີ7 (NSEDP) ແລະ ພ້ອມກັນນັ້ນກໍ່ຍັງໄດ້ສຸມໃສ່ການຫຼຸດພົ້ນອອກຈາກສະຖານະປະເທດດ້ອຍພັດທະນາ ໂດຍໄດ້ເລັ່ງບັນດາບູລິມະສິດກິດຈະກຳຕ່າງໆເພື່ອຕອບສະໜອງບັນດາສາມເງື່ອນໄຂອັນຕົ້ນຕໍຂອງປະເທດດ້ອຍພັດທະນາ ເຊັ່ນ: ດ້ານລ້າຍຮັບ, ການພັດທະນາຊັບພະຍາກອນມະນຸດແລະຄວາມດ້ອຍໂອກາດທາງດ້ານເສດຖະກິດ.

ນອກນີ້ ພວກເຮົາຂໍສະແດງຄວາມຊົມເຊີຍ ສປປລາວ ທີ່ພວມຢູ່ໃນແລວທາງບັນລຸຕົວເລກທີ່ສຳຄັນຂອງເປົ້າໝາຍ MDGs ແຕ່ກໍ່ຮູ້ດີວ່າ ຈຸດສຸມສຳລັບ ໄລຍະສຸດທ້າຍຂອງການຈັດຕັ້ງປະຕິບັດແຜນ NSEDP ຄັ້ງທີ7 ຈຳເປັນຕ້ອງໄດ້ເນັ້ນໃສ່ການຂາດໂພສະນາການ (MGD1), ອັດຕາການຕາຍຂອງເດັກແລະເດັກນ້ອຍທີ່ມີອາຍຸຕ່ຳກວ່າ5ປີຮວມທັງການປັບປຸງສຸຂະພາບແມ່ (MDG4+5), ອັດຕາການອອກໂຮງຮຽນລະດັບປະຖົມແລະມັດທະຍົມ (MDG2), ແລະການຮັບປະກັນຄວາມຍືນຍົງຂອງສິ່ງແວດລ້ອມ (MDG7). ໃນຄະນະທີ່ຄວາມທຸກຍາກພວມຫຼຸດລົງຢ່າງຕໍ່ເນື່ອງຕະຫຼອດໄລຍະ12ປີຜ່ານມາ, ປະຊາຊົນລາວຫຼາຍກວ່າ1.5ລ້ານຄົນຍັງຖືວ່າມີຄວາມທຸກຍາກ ແລະປະຊາກອນອີກຈຳນວນຫຼວງຫຼາຍກໍ່ຍັງດຳລົງຊີວິດແບບບໍ່ໝັ້ນທ່ຽງ ໃກ້ກັບເສັ້ນແບ່ງຄວາມທຸກຍາກ. ການເຕີບໂຕພຽງຢ່າງດຽວບໍ່ອາດນຳໄປສູ່ຊີວິດການເປັນຢູ່ທີ່ດີຂື້ນໂດຍອັດຕະໂນມັດສຳລັບຄົນສ່ວນໃຫ່ຍແລະການພັດທະນາກໍ່ອາດນຳມາສູ່ຄວາມແຕກໂຕນທາງດ້ານສັງຄົມແລະທີ່ຕັ້ງພູມສັນຖານທີ່ຈຳເປັນຕ້ອງໄດ້ຮັບການຫຼຸດຜ່ອນ.

***ຄວາມຄືບໜ້າຂອງການຈັດຕັ້ງປະຕິບັດບັນດາກິດຈະກຳຕ່າງໆທີ່ໄດ້ຮັບການເຫັນພ້ອມໃນກອງປະຊຸມໂຕະມົນປີຜ່ານມາ***

ທີ່ກອງປະຊຸມໂຕະມົນລະດັບສູງປີຜ່ານມາ ພວກເຮົາໄດ້ມີການປຶກສາຫາລືຢ່າງເປີດແປນແລະກົງໄປກົງມາກ່ຽວບັນດາສິ່ງທ້າທາຍຫຼາຍດ້ານທີ່ສປປລາວພວມປະເຊີນໃນປະຈຸບັນ. ພວກເຮົາໄດ້ສະຫຼຸບການປຶກສາຫາລືຂອງພວກເຮົາອອກເປັນ **16 ດ້ານກິດຈະກຳທີ່ຕ້ອງໄດ້ສືບຕໍ່ຈັດຕັ້ງປະຕິບັດ** ແລະຕົກລົງວ່າຄວາມຄືບໜ້າຈະຕ້ອງໄດ້ຮັບການຕິດຕາມຕະຫຼອດປີ. ພວກເຮົາຍິນດີທີ່ ວາລະການປຶກສາຫາລືອັນສຳຄັນໃນມື້ນີ້ ຈະກວມເອົາການປຶກສາຫາຄວາມຄືບໜ້າບັນດາກິດຈະກຳທີ່ກ່າວມາຂ້າງເທິງນັ້ນ.

ຕໍ່ກັບ**ການຄຸ້ມຄອງເສດຖະກິດມະຫາພາກແລະການເຕີບໂຕ** ບົດລາຍງານການປຶກສາຫາລືວ່າງບໍ່ດົນມານີ້ ຂອງອົງການ IMF ຂໍ້ IV ໄດ້ຢັ້ງຢືນວ່າລັດຖະບານໄດ້ນຳໃຊ້ມາດຕະການຕ່າງໆແກ້ໄຂບັນຫາຄວາມບໍ່ດຸ່ນດ່ຽງດ້ານເສດຖະກິດມະຫາພາກແລະການເງິນທີ່ສຳຄັນ. ແຕ່ເຖິງຢ່າງໃດກໍ່ດີ, ປະເທດຍັງຖືວ່າມີຄວາມອ່ອນໄຫວຕໍ່ກັບເຫັດການທີ່ບໍ່ອາດຄາດຄະເນໄດ້ທັງຈາກພາຍໃນແລະສາກົນ ແລະວົງເງິນສຳຮອງສາກົນຍັງຖືວ່າບໍ່ທັນພຽງພໍ. ການຕິດຕາມແລະກວດສອບບັນດາໂຄງການລົງທຶນພາກລັດ

ຈຳຕ້ອງໄດ້ຮັບການຍົກສູງແລະປະເມີນໂດຍນຳໃຊ້ຜົນປະໂຫຍດທີ່ກ້ວາງໄກກ່ວາເດີມຈາກການພັດທະນາ ເປັນບ່ອນອີງ. ການຄຸ້ມຄອງການເງິນພາກລັດທີ່ມີປະສິດທິພາບແລະປະສິດທິຜົນ ຖືວ່າເປັນພື້ນຖານອັນສຳຄັນສຳລັບການພັດທະນາຊາດແລະຫຼຸດຜ່ອນຄວາມທຸກຍາກ, ໂດຍສະເພາະແມ່ນຜ່ານການຮັບປະກັນການເຕີບໂຕທາງດ້ານເສດຖະກິດທີ່ຍືນຍົງ, ຄຸນຄ່າຂອງເງິນຕາຮ່ວມທັງການສືບຕໍ່ຕ້ານການສໍ້ລາດບັງຫຼວງແລະປັບປຸງປະສິດທພາບຂອງການບໍລິການພາກລັດ. ພວກເຮົາໃຫ້ຄວາມສຳຄັນເປັນຢ່າງຍິ່ງຕໍ່ການຈັດຕັ້ງປະຕິບັດດຳລັດ008 ຂອງນາຍົກລັດຖະມົນຢ່າງມີປະສິດທິຜົນ ຕໍ່ກັບການນຳໃຊ້ລະບຽບ ເງິນອັດຕາກິນ (DSA) ເພື່ອຮັບປະກັນການຄຸ້ມຄອງການເງິນທີ່ໂປ່ງໃສແລະການນຳໃຊ້ເງິນງົບປະມານຂອງລັດຮວມທັງເງິນຊ່ວຍເຫຼືອຢ່າງມີປະສິດທິຜົນ.

ຕໍ່ກັບ **ເປົ້າໝາຍ MDGs ທີ່ມີຄວາມຊັກຊ້າ,** ໃນຂະນະທີ່ພວກຍັງເລັງເຫັນເຖິງຄວາມສຳຄັນຂອງຂະແໜງກະສະກຳແລະການພັດທະນາຊົນນະບົດ ເປັນຂະແໜງການອັນຕົ້ນຕໍໃນການບັນລຸ ເປົ້າໝາຍ MDG1, ພວກເຮົາຊົມເຊີຍຄວາມຄືບໜ້າທີ່ເປັນນິມິດໝາຍອັນດີໃນການຈັດຕັ້ງປະຕິບັດແຜນປະຕິບັດງານການຮັບປະກັນດ້ານສະບຽງອາຫານແລະໂພຊະນາການຂອງຫຼາຍຂະແໜງການ ເຊິ່ງກວມເອົາການສ້າງຄະນະກຳມະການໂພຊະນະການແຫ່ງຊາດ. ກອງປະຊຸມປຶກສາຫາລືໂຕະມົນຂັ້ນແຂວງໄດ້ຈັດຂຶ້ນໃນເດືອນກັນຍາທີ່ຜ່ານມາ ແລະກໍ່ໄດ້ລວບລວມເອົາບັນດາບົດຮຽນທີ່ສຳຄັນຈຳນວນໜຶ່ງຈາກໄລຍະເບື້ອງຕົ້ນຂອງການຈັດຕັ້ງປະຕິບັດ ເຊິ່ງກວມເອົາ ບັນດາບົດບາດອັນສຳຄັນຂອງອົງການຈັດຕັ້ງທາງສັງຄົມ ທີ່ຈະປະກອບສ່ວນ ແລະຄວາມຈຳເປັນທີ່ຈະເຮັດໃຫ້ຊຸມຊົນທ້ອງຖິ່ນແລະບ້ານເປົ້າໝາຍພັດທະນານອນໃນຈຸດໃຈກາງຂອງທຸກໆຮູບແບບ ການພັດທະນາ. ຈາກປະສົບການລະດັບຊາດແລະສາກົນໄດ້ບົ່ງບອກວ່າມັນມີຄວາມກ່ຽວໂຍງຢ່າງແຂງແຮງລະຫວ່າງຜົນໄດ້ຮັບຂອງຂະແໜງກະສິກຳ, ການສຶກສາ, ການສ້າງຄວາມເຂັ້ມແຂງໃຫ້ເພດຍິງ, ສະທາແລະໂພຊະນາການ. ຄວາມເຊື່ອມໂຍງຂອງບັນດາຂະແໜງການເລົ່ານີ້ຈຳຕ້ອງໄດ້ຖືກຮັບຮູ້ຢ່າງເຕັມສ່ວນແລະແຈ້ງການຕອບໂຕ້ດ້ານນະໂຍບາຍທີ່ມີປະສິດທິຜົນແລະມີການປະສານງານທີ່ດີ. ເຖິງວ່າຈະມີຂໍ້ຈຳກັດໂດຍລວມດ້ານງົບປະມານ, ແຕ່ການສະໜອງງົບປະມານແກ່ຂະແໜງສຶກແລະສາທາລະນະສຸກຈຳຕ້ອງໄດ້ຮັບການປົກປ້ອງ ໂດຍຜ່ານການຈັດສັນບູລິມະສິດການໃຊ້ຈ່າຍຂອງຂະແໜງ. ກ່ຽວກັບເປົ້າໝາຍ MDG 7 ມີຄວາມສຳຄັນທີ່ຄວນຮັບຮູ້ວ່າ ອັດຕາການປົກຫຸ້ມຂອງປ່າໄມ້ພຽງຢ່າງດຽວອາດບໍ່ແມ່ນຕົວຊີ້ວັດທີ່ພຽງພໍ. ພວກເຮົາຂໍສະເໜີໃຫ້ລັດຖະບານລາວບັນຈຸນະໂຍບາຍ, ຍຸດທະສາດແລະກົດໝາຍການຄຸ້ມຄອງຊັບພະຍາກອນທຳມະຊາດທີ່ຍືນຍົງ ແລະໃຫ້ຄວາມສຳຄັນໃນການປົກປ້ອງຊີວະນາໆພັນ ເປັນເສົາຄ້ຳອັນສຳຄັນຂອງ MDG7. ພວກເຮົາຊົມເຊີຍຄວາມພະຍາຍາມຂອງລັດຖະບານໃນການຫຼຸດຜ່ອນການຄ້າໄມ້ເຖື່ອນແລະມີສ່ວນຮ່ວມກັບອີຢູໃນຂະບວນການບັງຄັບໃຊ້ກົດໝາຍ, ການຄຸມຄອງແລະການຄ້າໄມທີ່ຖືກກົດໝາຍ (FLEGT). ພວກເຮົາຫວັງວ່າຂະບວນການ FLEGT ຈະມີຄວາມຄືບໜ້າຢ່າງເປັນຮູບປະທຳໃນປີ2015ທີ່ຈະມາເຖິງນີ້.

**ດ້ານການປົກຄອງແລະສິດທິມະນຸດ** ພວກເຮົາຊົມເຊີຍ ກອງປະຊຸມປຶກສາຫາລືກ່ຽວກັບການທົບທວນຄືນໄລຍະການ (UPR) ຫວ່າງບໍ່ດົນມານີ້ ແລະ ກອງປະຊຸມບັນດາອົງການ INGO ເຊິ່ງຈັດຂຶ້ນໃນວັນທີ 28 ຕຸລາ. ຖືວ່າເປັນນິມິດໝາຍອັນດີທີ່ລັດຖະບານໄດ້ໃຫ້ການຮັບຮູ້ຢ່າງເປີດແປນຕໍ່ກັບການປະກອບສ່ວນອັນສຳຄັນຂອງອົງການ INGO ເຂົ້າໃນການພັດທະນາປະເທດຊາດແລະພວກເຮົາຫວັງວ່າບົນພື້ນຖານບ່ອນອີງດັ່ງກ່າວນີ້, ບົດແນະນຳການດຳເນີນວຽກງານຂອງອົງການ INGO ສະບັບໃໝ່ຈະໄດ້ຮັບການຈັດຕັ້ງປະຕິບັດໃນທິດທາງທີ່ໂປງໃສແລະຄາດເດົາໄດ້ ທັງໃນລະດັບສູນກາງແລະໃນທົ່ວທຸກແຂວງ. ພວກເຮົາຂໍສະເໜີໃຫ້ມີການປະເມີນການຈັດຕັ້ງປະຕິບັດບົດແນະນຳສະບັບໃໝ່ນີ້ໃນກອບເວລາໜຶ່ງປີ ເພື່ອເປັນສ່ວນໜຶ່ງໃນຄວາມພະຍາຍາມທີ່ຈະເຮັດໃຫ້ບົດແນະນຳນີ້ໄດ້ຮັບການປັບປຸງໃຫ້ດີຍິ່ງຂຶ້ນ.

**ສະມາຄົມທີ່ບໍ່ຫວັງຜົນກຳໄລທ້ອງຖິ່ນ (NPAs)** ກໍ່ມີຄວາມສຳຄັນເທົ່າທຽມກັນໃນການພັດທະນາຊາດແລະການມີສ່ວນຮ່ວມຂອງພາກປະຊາຊົນ. ເຖິງວ່າພວກເຮົາຈະຮອງຮັບເອົາການປຶກສາຫາລືເຊິ່ງໄດ້ຈັດຂຶ້ນເພື່ອທົບທວນດຳລັດຄຸ້ມຄອງ NPA ສະ

ບັບໃໝ່ ພວກເຮົາຍັງມີຄວາມເປັນຫ່ວງ ຕໍ່ກັບການນິຍາມທີ່ມີຂໍ້ຈຳກັດຍິ່ງຂຶ້ນກ່ຽວກັບກິດຈະກຳທີ່ໄດ້ຮັບອະນຸຍາດສຳລັບອົງການ NPAs ແລະ ແຜດານວົງເງິນການຊ່ວຍເຫຼືອຈາກພາຍນອກທີ່ບໍ່ຈຳເປັນຕ້ອງໄດ້ຂໍອະນຸຍາດລ່ວງໜ້າ.

ໃນກອງປະຊຸມ RTM ປີຜ່ານມາ ພວກເຮົາໄດ້ຍົກບັນຫາການຫາຍໂຕທີ່ບໍ່ສາມາດອະທິບາຍໄດ້ຂອງທ່ານ ສົມບັດ ສົມພອນ. ພວກເຮົາໄດ້ຮັບການຢືນຢັນຈາກລັດຖະບານວ່າ ລັດຖະບານລາວໄດ້ດຳເນີນທຸກຂັ້ນຕອນເພື່ອສືບຕໍ່ການສືບສວນແລະນຳຜູ້ກະທຳຜິດມາລົງໂທດຕາມກົດໝາຍ. ໜຶ່ງປີຜ່ານໄປ (ແລະເກືອບສອງປີພາຍຫຼັງການຫາຍໂຕຂອງທ່ານ), ພວກເຮົາເຫັນວ່າແລະມີຄວາມເປັນຫ່ວງຢ່າງສູງ ທີ່ຄະດີຍັງບໍ່ມີຄວາມຄືບໜ້າເທົ່າທີ່ຄວນແລະ ທ່ານ ສົມບັດ ຍັງບໍ່ໄດ້ກັບຄືນສູ່ຄອບຄົວຂອງເພິ່ນ. ອີກເທື່ອໜຶ່ງ ພວກເຮົາຂໍຮຽກຮ້ອງມາຍັງລັດຖະບານໃຫ້ແກ້ໄຂກໍລະນີນີ້ຢ່າງຮີບດ່ວນ. ນອກນີ້ ພວກເຮົາຍັງຂໍສະເໜີໃຫ້ເຊີນຄະນະເຮັດວຽກຂອງອົງການສະຫະປະຊາຊາດວ່າດ້ວຍ ການຫາຍໂຕດ້ວຍການໃຊ້ກຳລັງບັງຄັບ ຫຼືບໍ່ສະໝັກໃຈ ໃຫ້ຊ່ວຍແກ້ໄຂກໍລະນີນີ້. ຄວາມບໍ່ແນ່ນອນທີ່ຕໍ່ເນື່ອງກ່ຽວກັບກໍລະນີນີ້ ຈະບໍ່ສົ່ງຜົນດີແກ່ສປປລາວ ໃນຂະບວນການທົບທວນຄືນໄລຍະກາງ (UPR)ທີ່ຈະຈັດຂຶ້ນໃນໄວໆນີ້.

**ຕໍ່ກັບຂະແໜງທີ່ດິນ** ພວກເຮົາຊົມເຊີຍສັນຍານອັນດີຈາກລັດຖະບານທີ່ຈະບໍ່ອະນຸຍາດໃຫ້ມີການສຳປະທານຫຼືເວັນຄືນທີ່ດິນຂອງປະຊາຊົນແກ່ຂະແໜງເອກະຊົນໃນນະໂຍບາຍທີ່ດິນແຫ່ງຊາດ. ພວກເຮົາຂໍສະເໜີໃຫ້ລັດຖະບານຈຳກັດໃຫ້ມີການເວັນຄືນທີ່ດິນຂອງປະຊາຊົນສຳລັບເປົ້າໝາຍໂຄງການພາກລັດເທົ່ານັ້ນ. ສິ່ງດັ່ງກ່າວຈະປະກອບສ່ວນເຂົ້າໃນການປັບປຸງດ້ານຄວາມໝັ້ນຄົງດ້ານສິດຄວາມເປັນເຈົ້າຂອງ ໂດຍອີງໃສ່ບົດແນະນຳດ້ານຄວາມສະໝັກໃຈຂອງອົງການ FAO, ລະບຽບຂອງ ASEAN ແລະບັນດາຂໍ້ຕົກລົງສອງຝ່າຍກ່ຽວກັບການປົກປ້ອງການລົງທຶນ ຮວມທັງຂໍ້ຕົກລົງຕ່າງໆທີ່ໄດ້ລົງນາມຮ່ວມກັບປະເທດສະມາຊິກອີຢູ. ໃນກໍລະນີເວັນຄືນທີ່ດິນສຳລັບເປົ້າໝາຍໂຄງການລັດ ພາກສ່ວນທີ່ໄດ້ຮັບຜົນກະທົບຄວນໄດ້ຮັບການຊົດເຊີຍຢ່າງເຕັມສ່ວນ, ຍຸຕິທຳແລະລ່ວງໜ້າ ສຳລັບທັງສອງກໍລະນີຄື ທີ່ດິນທີ່ເປັນກຳມະສິດບຸກຄົນແລະທີ່ດິນທີ່ເປັນຂອງຮວມໝູ່. ເນື່ອງຈາກວ່າມີເນື້ອທີ່ດິນພຽງ30% ໄດ້ຮັບການຂຶ້ນທະບຽນອອກໃບຕາດິນ, ພວກເຮົາຂໍສະເໜີໃຫ້ລັດຖະບານກຳນົດນະໂຍບາຍແລະກົດໝາຍຢ່າງຈະແຈ້ງເພື່ອປົກປ້ອງສິດດ້ານປະເພນີທີ່ໄດ້ຮັບການສືບທອດເພື່ອຮັບປະກັນດ້ານຊີວິດການເປັນຢູ່ຂອງປະຊາຊົນໂດຍສະເພາະແມ່ນກຸ່ມຄົນທີ່ອາໄສໃນເຂດຊົນນະບົດແລະດ້ອຍໂອກາດ.

***<u>ການຮ່ວມມືດ້ານການພັດທະນາເພື່ອໝາກຜົນອັນເປັນຮູບປະທຳ</u>***

ຄູ່ຮ່ວມພັດທະນາເອີຣົບໄດ້ກຳນົດວົງເງິນປະມານ $550 ລ້ານໂດລາ ເພື່ອສະໜັບສະໜຸນການຈັດຕັ້ງປະຕິບັດ ແຜນ NSEDP ຄັ້ງທີ7. ວົງເງິນດັ່ງກ່າວກວມຫຼາຍກ່ວາ30%ຂອງການຊ່ວຍເຫຼືອທາງການ(ODA)ທີ່ລັດຖະບານໄດຮັບທັງໝົດໃນປະຈຸບັນ. ODA ເກືອບທັງໝົດທີ່ສະໜອງໂດຍຄູ່ຮ່ວມພັດທະນາເອີຣົບ ເປັນເງິນຊ່ວຍເຫຼືອລ້າ.

ເພື່ອເປັນການຍົກລະດັບການຮ່ວມມືໃຫ້ສູງຍິ່ງຂຶ້ນ ພວກເຮົາຂໍສະເໜີມາຍັງລັດຖະບານແລະບັນດາຄູ່ຮ່ວມພັດທະນາຂອງພວກເຮົາວ່າໃນປີ2015 ພວກເຮົາຄວນດຳເນີນການທົບທວນຄືນຮ່ວມກັນວ່າຈະເຮັດແນວໃດໃຫ້ ຂະບວນການໂຕະມົນ ຮວມທັງບັນດາຄະນະເຮັດວຽກລະດັບຂະແໜງການຕ່າງໆ ມີຄວາມແທດເໝາະ, ມີຄວາມໜັກແໜ້ນດ້ານເນື້ອໃນແລະທຸກພາກສ່ວນມີສ່ວນຮ່ວມໂດຍສະເພາະແມ່ນໃນກອບຂອງແຜນ NSEDP ຄັ້ງທີ8.

***<u>ແຜນ NSEDP ຄັ້ງທີ8 ແລະຍຸດທະສາດການພັດທະນາໄລຍະຍາວ</u>***

ພວກເຮົາຊົມເຊີຍການກະກຽມຂອງລັດຖະບານໃນການຮ່າງແຜນ NSEDP ຄັ້ງທີ8 ແລະອຳນວຍຄວາມສະດວກໃນການປຶກສາຫາລືຂະບວນຮ່າງແຜນດັ່ງກ່າວຢ່າງເຕັມສ່ວນ, ໂດຍມີເປົ້າໝາຍທີ່ຈະບັນລຸໃຫ້ໄດ້ແຜນທີ່ມີຄຸນນະພາບສູງທີ່ມີການອອກແບບເປັນຢ່າງດີແລະມີກອບການຕິດຕາມຜົນໄດ້ຮັບ.

ພວກເຮົາສະໜັບສະໜຸນການສຸມໃສ່ ຄວາມພະຍາຍາມທີ່ຈະນຳປະເທດໃຫ້ຫຼຸດພົ້ນຈາກສະຖານະດ້ອຍພັດທະນາໂດຍມີຄວາມຕັ້ງໃຈໃນການບັນລຸການເຕີບໂຕທາງດ້ານເສດຖະກິດທີ່ທົ່ວເຖິງແລະການພັດທະນາທີ່ຍືນຍົງ. ໃນເວລາດຽວກັນກໍ່ຄວນໃຫ້ຄວາມສຳຄັນກ່ຽວກັບຄວາມອາດສາມາດໃນການຈັດສັນງົບປະມານສຳລັບແຜນດັ່ງກ່າວ. ກະແສປະຈະບັນລະບຸວ່າການສະໜອງດ້ານການເງິນສ່ວນໃຫ່ຍໃຫ້ແກ່ການຈັດຕັ້ງປະຕິບັດແຜນພັດທະນາເສດຖະກິດສັງຄົມແຫ່ງຊາດຄັ້ງທີ8 ທີ່ອາດຈະໄດ້ຂົນຂວາຍຈາກພາກເອກະຊົນແລະຂະແໜງການທະນາຄານຕ່າງໆນັ້ນ ແມ່ນຍັງເປັນຂໍ້ກັງວົນຢູ່. ດັ່ງທີ່ໄດ້ຖືກຍອມຮັບໃນເອກະສານກ່ຽວກັບກອງປະຊຸມໂຕະມົນ RTIM ທີ່ວ່າຍັງມີ 'ຄວາມສ່ຽງທີ່ເຊື່ອມໂຍງກັບແຜນການການເງິນໃນປະຈຸບັນ ເຊິ່ງອາດສົ່ງຜົນກະທົບແກ່ການບັນລຸໝາກຜົນແລະເປົ້າໝາຍໂດຍລວມໄດ້'.

ໃນຄະນະທີ່ພວມຂັບເຄື່ອນກ້າວໄປສູ່ອະນາຄົດ, ພວກເຮົາຂໍສະເໜີໃຫ້ລັດຖະບານພິຈາລະນາປັບປຸງໄປນຳໃຊ້ຮູບແບບການເຕີບໂຕ ທີ່ມີຄຸນນະພາບສູງຂຶ້ນກ່ວາເດີມ ແລະຄຽງຄູ່ກັບການພັດທະນາຊັບພະຍາກອນທຳມະຊາດແບບຍືນຍົງ, ຫຼຸດຜ່ອນຜົນກະທົບທາງລົບຈາກການປ່ຽນແປງດິນຟ້າອາກາດແລະຮັບປະກັນການຄ້ຳປະກັນສະບຽງອາຫານ. "ການເຕີບໂຕສີຂຽວ"ແມ່ນມີທ່າອ່ຽງອັນໃຫ່ຍຫຼວງໃນສປປລາວ ຖ້າຫາກວ່າມີສິ່ງຈູງໃຈທີ່ໜ້າສົນໃຈແລະມີກອບການຄຸ້ມຄອງດ້ານນິຕິກຳທີ່ດີ. ນອກນີ້ສິ່ງດັ່ງກ່າວຍັງຈະເປັນການສະໜັບສະໜຸນການມີສ່ວນຮ່ວມຂອງສັງຄົມຮວມທັງຊາວໜຸ່ມຈຳນວນຫຼາຍທີ່ພວມເຂົ້າສູ່ຕະຫຼາດແຮງງານ.

ມັນເປັນຄວາມຫວັງຂອງພວກເຮົາວ່າ ໃນກອງປະຊຸມ RTIM ໃນມື້ນີ້, ພວກເຮົາຈະສາມາດປຶກສາຫາລືບັນຫາຕ່າງໆໃນທິດທາງທີ່ສ້າງສັນແລະຈິງໃຈ ເພື່ອເປັນການຂັບເຄື່ອນຄວາມຄືບໜ້າທີ່ເປັນຮູບປະທຳຍິ່ງຂຶ້ນໃນການພັດທະນາສປປລາວແລະປະຊາຊົນພາຍໃນປະເທດ. ບັນດາຄູ່ຮ່ວມພັດທະນາເອີຣົບຂໍຢ້ຳຄືນຄວາມໝັ້ນໝັ້ນອັນແຂງແຮງຂອງເຮົາອີກເທື່ອໜຶ່ງວ່າຈະຄຽງບ່າຄຽງໄລ່ແລະສະໜັບສະໜຸນການພັດທະນານີ້ເພື່ອຊີວິການເປັນຢູ່ ແລະ ສິດທິມະນຸດ ສຳລັບປະຊາຊົນລາວທຸກຄົນທີ່ດີຂຶ້ນກ່ວາເດີມ.